ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະກິລາ

ຫ້ອງການ ເລກທີ 828 /ຫກ

ນະຄອນຫຼວງວຽງຈັນ, ວັນທີ 16 ມິນາ 2026

# ໜັງສືເຊີນເຂົ້າຮ່ວມແຂ່ງຂັນປະມູນ

1. ລັດຖະບານແຫ່ງປະເທດສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສປປລາວ) ໄດ້ຮັບການອະນຸມັດທຶນຊ່ວຍເຫຼືອທາງການເພື່ອການພັດທະນາຂອງຍີ່ປຸ່ນ (ທຶນຊ່ວຍເຫຼືອລ້າ) ຈາກອົງການຮ່ວມມືສາກົນ ຍີ່ປຸ່ນ (ໄຈກາ) ບົນພື້ນຖານຂອງສັນຍາອະນຸມັດໂຄງການ (ສັນຍາໂຄງການ) ທີ່ໄດ້ເຊັນຂຶ້ນໃນວັນທີ 25 ກຸມພາ 2025, ລະຫວ່າງລັດຖະບານແຫ່ງ ສປປລາວ ແລະ ອົງການໄຈກາ (JICA) ເພື່ອຈັດຕັ້ງປະຕິບັດ ໂຄງການປັບປຸງສູນພັດທະນາຄູຂັ້ນແຂວງ (ໂຄງການ).
2. ກະຊວງສຶກສາທິການ ແລະ ກິລາ (ຜູ້ສັ່ງຊື້) ໃນນາມຂອງລັດຖະບານ ສປປ ລາວ, ຂໍຖືເປັນກຽດເຊີນບໍລິສັດທີ່ສົນໃຈ ເຂົ້າຮ່ວມຍື່ນຊອງປະມູນ ສໍາລັບການສະໜອງອຸປະກອນ ແລະ ສິ່ງອໍານວຍຄວາມສະດວກ ໃຫ້ແກ່ສູນພັດທະນາຄູ ຂອງແຂວງຜົ້ງສາລີ ເມືອງບຸນເໜືອ, ແຂວງອຸດົມໄຊ ເມືອງໄຊ, ແຂວງບໍ່ແກ້ວ ເມືອງຫ້ວຍຊາຍ, ແຂວງຫົວພັນ ເມືອງຊໍາເໜືອ ແລະ ແຂວງໄຊຍະບູລີ ເມືອງໄຊຍະບູລີ (ອຸປະກອນ ແລະ ສິ່ງອໍານວຍຄວາມສະດວກ)
3. ການປະມູນແມ່ນເປີດກວ້າງສໍາລັບຜູ້ເຂົ້າແຂ່ງຂັນປະມູນທຸກທ່ານ ທີ່ມີຄຸນນະວຸດທີ່ເໝາະສົມ ແລະ ມີເງື່ອນໄຂພຽງພໍຕາມມາດຕະຖານຂ້າງລຸ່ມນີ້:
ສະຫລຸບຫຍໍ້ກ່ຽວກັບຄຸນນະວຸດທິ ແລະ ມາດຕະເກນທີ່ເໝາະສົມສໍາລັບຜູ້ຈະເຂົ້າຮ່ວມແຂ່ງຂັນການປະມູນ

| ລາຍການເງື່ອນໄຂ | ຂໍ້ຮຽກຮ້ອງ |
|---|---|
| ການຮ່ວມທຸລະກິດ | ບໍ່ສາມາດເຂົ້າປະມູນໄດ້. |
| ໃບອະນຸຍາດດໍາເນີນທຸລະກິດ | ບໍລິສັດທີ່ຈະເຂົ້າປະມູນຕ້ອງມີໃບອະນຸຍາດດໍາເນີນທຸລະກິດ ແລະ ໃບທະບຽນອາກອນທີ່ໃຊ້ໄດ້ລ່າສຸດຕາມລະບຽບກົດໝາຍແຫ່ງ ສປປ ລາວ. |
| ຜົນປະໂຫຍດທັບຊ້ອນ | ຜູ້ເຂົ້າແຂ່ງຂັນປະມູນຕ້ອງບໍ່ມີຜົນປະໂຫຍດທັບຊ້ອນ. |
| ຜູ້ທີ່ບໍ່ມີຄວາມເໝາະສົມໂດຍໄຈກາ (JICA) ຕັດສິນ | ຜູ້ທີ່ຈະເຂົ້າແຂ່ງຂັນປະມູນຕ້ອງບໍ່ແມ່ນຜູ້ທີ່ໄດ້ຖືກປະກາດວ່າເປັນຜູ້ທີ່ບໍ່ມີຄວາມເໝາະສົມໂດຍໄຈກາ. |

4. ກໍານົດການສະໜອງອຸປະກອນ ແລະ ສິ່ງອໍານວຍຄວາມສະດວກກ່ອນ ຫຼື ບໍ່ກາຍວັນທີ 31 ກໍລະກົດ 2027.
5. ເອກະສານປະມູນຄົບຊຸດທັງໝົດແມ່ນເປັນພາສາອັງກິດ ເຊິ່ງຜູ້ສົນໃຈເຂົ້າແຂ່ງຂັນປະມູນສາມາດຊື້ໄດ້ໂດຍການເຂົ້າມາຂຽນແບບຟອມເປັນລາຍລັກອັກສອນ ແລະ ຍື່ນຊື້ຊອງປະມູນໄດ້ຕາມທີ່ຢູ່ ທີ່ລະບຸດ້ານລຸ່ມນີ້, ໃນລາຄາ 2,500,000 ກີບ ຖ້າຊື້ແລ້ວບໍ່ສາມາດຖອນເງິນຄືນໄດ້, ວິທີການຊໍາລະແມ່ນເປັນເງິນສົດ, ວັນ ແລະ ເວລາ ຂາຍຊອງປະມູນແມ່ນໄດ້ລະບຸ ໄວ້ລຸ່ມນີ້. ສະນັ້ນ, ຈຶ່ງຂໍໃຫ້ບໍລິສັດທີ່ມີຄວາມສົນໃຈ ໃຫ້ກະກຽມສໍາເນົາໃບອະນຸຍາດດໍາເນີນທຸລະກິດມາຍື່ນພ້ອມ ເພື່ອຊື້ຊອງປະມູນ.

| | |
|---|---|
| ໄລຍະ ຂາຍເອກະສານປະມູນ | 16-27 ມີນາ, 2026 (ໃນໂມງລັດຖະການເທົ່ານັ້ນ)<br>ເວລາ: 9:00-12:00 ແລະ 14:00-16:00 |

| | |
|---|---|
| ສົ່ງເຖິງ | ຜູ້ບໍລິຫານໂຄງການ,<br>ຄະນະໜ່ວຍງານຄຸ້ມຄອງໂຄງການ ສຳລັບໂຄງການປັບປຸງສູນພັດທະນາຄູ ຂັ້ນແຂວງ,<br>ກະຊວງສຶກສາທິການ ແລະກິລາ |
| ສະຖານທີ່ຂາຍຊອງ/ທີ່ຢູ່ | ຕຶກ A1 ຊັ້ນ 3, ຫ້ອງ 329, ພະແນກບໍລິຫານ, ກົມສ້າງຄູ<br>ກະຊວງສຶກສາທິການ ແລະກິລາ<br>ຕູ້ ປ.ນ 067, ຖະໜົນ ລ້ານຊ້າງ-1, ເມືອງ ຈັນທະບູລີ, ນະຄອນຫຼວງ ວຽງຈັນ |
| ເບີໂທ | ໂທ: 02052221081/ 02095933335/ 02055383881 |
| ອີເມລ | jicapmudte2025@gmail.com |

6. ຂໍເຊີນຜູ້ຕາງໜ້າບໍລິສັດ ເຂົ້າຮ່ວມກອງປະຊຸມອະທິບາຍສຳລັບການປະມູນ ແລະ ແກ້ໄຂຂໍ້ຂ້ອງໃຈກ່ອນຍື່ນຊອງປະມູນໄດ້ທາງອອນລາຍ. ການປະຊຸມທາງອອນລາຍຈະຈັດຂຶ້ນຕາມກຳນົດວັນ ແລະ ເວລາລຸ່ມນີ້. ສະເພາະບໍລິສັດທີ່ໄດ້ຊື້ຊອງປະມູນໂດຍກົງຈາກຜູ້ສັ່ງຊື້ເທົ່ານັ້ນທີ່ຈະໄດ້ຮັບອະນຸຍາດໃຫ້ເຂົ້າຮ່ວມປະຊຸມນີ້ໄດ້.

| | |
|---|---|
| ວັນທີ ແລະ ເວລາ | 31 ມີນາ 2026 ເລີ່ມເວລາ: 14:00 ໂມງ |
| ຊ່ອງທາງການປະຊຸມ | ຜ່ານທາງຊູມ ZOOM<br>ເລກລະຫັດເຊື່ອມຕໍ່ເຂົ້າປະຊຸມ ຈະສົ່ງໃຫ້ສະເພາະຜູ້ທີ່ໄດ້ຊື້ຊອງປະມູນແລ້ວເທົ່ານັ້ນ ການສົ່ງແຈ້ງບໍ່ກາຍວັນທີ 30 ມີນາ 2026. |

7. ຊອງປະມູນທີ່ປະກອບຄົບຊຸດຕ້ອງສົ່ງມາໃຫ້ຖືກຕ້ອງຕາມທີ່ຢູ່ລະບຸດ້ານລຸ່ມ ແລະ ໃຫ້ທັນ, ບໍ່ໃຫ້ກາຍເວລາ 10:00 ໂມງເຊົ້າ ຕາມເວລາທ້ອງຖິ່ນ ທີ່ ນະຄອນຫຼວງວຽງຈັນ ຂອງວັນທີ **15 ພຶດສະພາ 2026**, ແລະ ຕ້ອງປະກອບໃບຄໍ້າປະກັນການປະມູນເຂົ້າໃນຊອງປະມູນນຳດ້ວຍ ໂດຍຄໍ້າປະກັນໃນມູນຄ່າບໍ່ຫຼຸດສອງສ່ວນຮ້ອຍ (2%) ຂອງລາຄາປະມູນ ທີ່ເປັນສະກຸນເງິນໂດລາ. ການເປີດຊອງປະມູນແມ່ນຈະເລີ່ມ ເວລາ 10:00 ໂມງຕາມເວລາທ້ອງຖິ່ນ ທີ່ ນະຄອນຫລວງວຽງຈັນ ວັນທີ **15 ພຶດສະພາ 2026**, ໂດຍມີການເຂົ້າຮ່ວມເຊິ່ງໜ້າ ຈາກຄະນະກຳມະການປະມູນ, ທີ່ປຶກສາໂຄງການ ແລະ ຕົວແທນຂອງຜູ້ເຂົ້າແຂ່ງຂັນປະມູນທີ່ສົນໃຈຮ່ວມນຳ, ສະຖານທີ່ເປີດຊອງປະມູນລະບຸດ້ານລຸ່ມນີ້:

| | |
|---|---|
| ສົ່ງເຖິງ | ຄືກັບທີ່ລະບຸໃນຂໍ້ 5 ຂ້າງເທິງ |
| ສະຖານທີ່-ທີ່ຢູ່ເພື່ອເປີດຊອງ | ຫ້ອງປະຊຸມ ຊັ້ນ 4, ຕຶກໄອຊີທີ , ກະຊວງສຶກສາທິການ ແລະກິລາ<br>134 ຖະໜົນ ສາມແສນໄທ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ |

**ຫົວໜ້າຫ້ອງການ**

ພ. ປອ. ຫຼ້າວັນ ວົງຄຳຊານ

**Lao People's Democratic Republic**

Peace Independence Democracy Unity Prosperity

Ministry of Education and Sports

Permanent Secretary Office

No.: 829 /PSO

Vientiane Capital, dated: March 16 ,2026

# Invitation for Bids

1. The Government of the Lao People's Democratic Republic (Lao PDR) has received a Japanese ODA Grant (the Grant) from the Japan International Cooperation Agency (JICA) on the basis of the Grant Agreement (G/A) signed on the February 25, 2025, between the Government of Lao PDR and JICA concerning the Project for the Improvement of the Provincial Teacher Development Centers (the Project).

2. Ministry of Education and Sports (the Buyer) on behalf of the Government of Lao PDR now invites sealed bid from eligible bidders for supply of Goods and Related Services in "Phongsaly Provincial Teacher Development Center in Boun Neua", "Oudomxay Provincial Teacher Development Center in Muang Xai", "Bokeo Provincial Teacher Development Center in Houayxay", "Houaphanh Provincial Teacher Development Center in Sam Neua" and "Xayabury Provincial Teacher Development Center in Xayabury" (the Goods and Related Services).

3. This Bidding is open to all eligible Bidders who satisfy at least the following criteria.

Summary of Eligibility and Qualification Criteria

| Items | Requirements |
|---|---|
| Joint Venture | Not Acceptable. |
| Business License | A Bidder shall have a valid business license and a valid tax registration license under the laws of Lao PDR. |
| Conflict of Interest | A Bidder shall not have a conflict of interest. |
| JICA Ineligibility | A Bidder shall not have been declared ineligible by JICA. |

4. The Goods and Service should be provided on or before July 31, 2027.

5. A complete set of the Bidding Documents in English may be purchased by the interested Bidders on the submission of a writing application to the address below and upon payment of non-refundable fee of 2,500,000 Kip. The method of payment shall be in cash. The date and time for the sale of Bidding Documents are described below. Each interested Bidder shall be required to submit a copy of its business license which proof nationality of the Bidder upon obtaining of the Bidding Documents.

| | |
|---|---|
| Sale of Bidding Documents | Date: March 16 to March 27, 2026 (working days only)<br>Time: 9:00-12:00 and 14:00-16:00 |
| Attention | Project Manager,<br>Project Management Unit (PMU) for the Project for the Improvement of the Provincial Teacher Development Centers, Ministry of Education and Sports |
| Place and Address | 3rd Floor, Room No. 329, New Building,<br>Administration Division, Department of Teacher Education,<br>Ministry of Education and Sports,<br>P.O.Box 067, Lane Xang Avenue-1, Chanthabouly District,<br>Vientiane Capital, Lao PDR |
| Telephone/Fax | 02052221081/02055383881/02095933335 |
| E-mail address | jicapmudte2025@gmail.com |

6. The Bidder's designated representative is invited to attend an ONLINE pre-bid meeting. A pre-bid meeting will take place at the following date and time. Only the Bidders who have purchased the Bidding Documents directly from the Buyer are allowed to attend the pre-bid meeting.

| | |
|---|---|
| Date, Time: | March 31, 2026, 14:00 |
| Means of Meeting: | ZOOM<br>Meeting URL will be given only to the Bidders who purchase for the Bidding Documents by March 30, 2026. |

7. Bid must be delivered to the address below at or before 10:00 a.m. Vientiane Local Time on May 15, 2026 and must be accompanied by a Bid Security in amount of not less than two percent (2%) of the Bid price in the currency of US Dollar. All bids will be opened at 10:00 a.m. Vientiane Local Time on May 15, 2026 at place described below in the presence of the Buyer, the Consultant and the Bidders' representatives who choose to attend.

| | |
|---|---|
| Attention | Same as the Attention provided in No. 5 hereinbefore. |
| Address | 4th Floor, Conference Room, ICT Building,<br>Ministry of Education and Sports,<br>134 Rue Samsenthai, Chanthabouly District,<br>Vientiane Capital, Lao PDR |

Cabinet Office

Assoc.Prof.Dr.Lavanh VONGKHAMSANE